**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 70/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 04 SEP 2020

# ແຈ້ງການ

**ເຖິງ:** ບໍລິສັດປະເມີນມູນຄ່າຊັບສິນທີ່ມີຈຸດປະສົງຂໍຮັບຮອງເປັນບໍລິສັດປະເມີນມູນຄ່າຊັບສິນທີ່ເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງການທະນາຄານ, ທີ່ນັບຖື;

**ເລື່ອງ:** ໂຈະຊົ່ວຄາວການຮັບຮອງບໍລິສັດປະເມີນມູນຄ່າຊັບສິນທີ່ມີຈຸດປະສົງເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ແລະ ຂະແໜງການທະນາຄານ.

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;
- ອີງຕາມລະບຽບວ່າດ້ວຍ ການຮັບຮອງບໍລິສັດ ປະເມີນຊັບສິນ ສະບັບເລກທີ 003/ຄຄຊ, ລົງວັນທີ 08 ທັນວາ 2015.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍຖືເປັນກຽດແຈ້ງມາຍັງບໍລິສັດປະເມີນມູນຄ່າຊັບສິນຊາບວ່າໃນໄລຍະຜ່ານມາ ສຄຄຊ ໄດ້ຮັບຮອງບໍລິສັດປະເມີນມູນຄ່າຊັບສິນຈຳນວນທັງໝົດ 9 ບໍລິສັດ ເພື່ອເຂົ້າມາເຄື່ອນໄຫວໃນຂົງເຂດວຽກງານຫຼັກຊັບ ແລະ ຂົງເຂດທະນາຄານ.

ຜ່ານການເຄື່ອນໄຫວຕົວຈິງເຫັນວ່າ ບໍລິສັດເຫຼົ່ານັ້ນໄດ້ປະກອບສ່ວນປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບ ແລະ ຂົງເຂດທະນາຄານໄດ້ດີພໍສົມຄວນ, ແຕ່ເຖິງຢ່າງໃດກໍ່ຕາມ ສຄຄຊ ເຫັນວ່າ ເມື່ອອີງໃສ່ບົດຮຽນຂອງຫລາຍປະເທດ ແລະ ຫຼັກການຂອງສາກົນແລ້ວການເຄື່ອນໄຫວວຽກງານດັ່ງກ່າວຍັງຂາດຜູ້ຄຸ້ມຄອງຫຼັກ, ການກຳນົດມາດຕະຖານການປະເມີນຍັງບໍ່ທັນລວມສູນ, ການກໍ່ສ້າງ ແລະ ຄຸ້ມຄອງນັກວິຊາຊີບປະເມີນມູນຄ່າຊັບສິນ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ.

ສະນັ້ນ ເພື່ອຮັບປະກັນການໃຫ້ບໍລິການວຽກງານດັ່ງກ່າວມີປະສິດທິຜົນ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ໃຊ້ບໍລິການ, ສຄຄຊ ຈະໂຈະຊົ່ວຄາວການຮັບຮອງບໍລິສັດປະເມີນມູນຄ່າຊັບສິນກ່ອນເພື່ອສ້າງລະບົບ ແລະ ກົນໄກລວມ ເພື່ອຮັບຮອງການເຄື່ອນໄຫວວຽກງານດັ່ງກ່າວ. ພາຍຫຼັງມີຄວາມພ້ອມຮຽບຮ້ອຍແລ້ວ ສຄຄຊ ຈະແຈ້ງໃຫ້ທ່ານຊາບຕາມພາຍຫຼັງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດປະເມີນມູນຄ່າຊັບສິນເພື່ອຊາບ.

**ຫົວໜ້າສຳນັກງານ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ສຳນັກງານ ສຄຊ

**ສາຍສະໝອນ ຈັນທະຈັກ**